**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງສະຖາບັນການເງິນ

ເລກທີ 437/ກຄສງ

ນະຄອນຫຼວງວຽງຈັນ, ວັນທີ 20 ທັນວາ 2021

# ແຈ້ງການ

**ເຖິງ:** ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຕ້ອງການດຳເນີນທຸລະກິດ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຢູ່ ສປປ ລາວ.

**ເລື່ອງ:** ເປີດຮັບຄົ້ນຄວ້າພິຈາລະນາການອອກອະນຸຍາດດຳເນີນທຸລະກິດ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຢູ່ ສປປ ລາວ ໃນຮູບແບບ ບໍລິສັດ ເຊົ່າສິນເຊື່ອ.

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຄຸ້ມຄອງສະຖາບັນການເງິນ ສະບັບເລກທີ 1041/ທຫລ, ລົງວັນທີ 25 ພະຈິກ 2016;
- ອີງຕາມ ດຳລັດວ່າດ້ວຍທຸລະກິດເຊົ່າສິນເຊື່ອ (ສະບັບປັບປຸງ) ເລກທີ 471/ລບ, ລົງວັນທີ 02 ກໍລະກົດ 2021.

ກົມຄຸ້ມຄອງສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບວ່າ: ໃນໄລຍະຜ່ານມາ ກົມຄຸ້ມຄອງສະຖາບັນການເງິນ ໄດ້ອອກແຈ້ງການໂຈະຊົ່ວຄາວການອອກອະນຸຍາດດຳເນີນທຸລະກິດສະຖາບັນການເງິນ ຢູ່ ສປປ ລາວ ເພື່ອທົບທວນ ແລະ ປະເມີນຄືນບັນດາລະບຽບນິຕິກຳໃຫ້ແທດເໝາະກັບສະພາບການຂະຫຍາຍຕົວຂອງເສດຖະກິດ ຢູ່ ສປປ ລາວ, ຊຶ່ງມາຮອດປະຈຸບັນການທົບທວນ ແລະ ປັບປຸງບັນດາລະບຽບນິຕິກຳດັ່ງກ່າວໄດ້ສຳເລັດເປັນທີ່ຮຽບຮ້ອຍແລ້ວ. ສະນັ້ນ, ເພື່ອເປັນການສົ່ງເສີມການລົງທຶນໃນຂະແໜງທຸລະກິດ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຈຶ່ງໄດ້ອອກແຈ້ງການມາຍັງບັນດາທ່ານ ດັ່ງນີ້:

1. ທະນາຄານແຫ່ງ ສປປ ລາວ ຈະເປີດຮັບສຳນວນເອກະສານຂໍອະນຸຍາດດຳເນີນທຸລະກິດສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຢູ່ ສປປ ລາວ ໃນຮູບແບບ ບໍລິສັດ ເຊົ່າສິນເຊື່ອ **ນັບແຕ່ມື້ລົງລາຍເຊັນແຈ້ງການນີ້ເປັນຕົ້ນໄປ;**
2. ພ້ອມດຽວກັນນີ້ ຂໍແຈ້ງມາຍັງບັນດາທ່ານຊາບວ່າ ທຸກຮູບແບບສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງທະນາຄານແຫ່ງ ສປປ ລາວ **ແມ່ນບໍ່ອະນຸຍາດໃຫ້ດຳເນີນທຸລະກິດເປັນເງິນຕາຕ່າງປະເທດ.**

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 **BNL.VTE.LS**
ໂທລະສານ: (856)-21-213108 ໂທລະສັບ: 213109-213110 **Email: BOL@bol.gov.la; www.bol.gov.la**

ຖ້າຫາກທ່ານມີຄວາມສົນໃຈຂໍອະນຸຍາດດຳເນີນທຸລະກິດສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຢູ່ ສປປ ລາວ ສາມາດພົວພັນສອບຖາມຂໍ້ມູນໄດ້ທີ່ ກົມຄຸ້ມຄອງສະຖາບັນການເງິນ ຫຼື ສາຂາ ທະນາຄານແຫ່ງ ສປປ ລາວ ປະຈຳພາກ. ພ້ອມດຽວກັນ, ສາມາດເຂົ້າເບິ່ງລາຍລະອຽດກ່ຽວກັບການປະກອບເອກະສານຂໍອະນຸຍາດດຳເນີນທຸລະກິດ ແລະ ບັນດາ ນິຕິກຳຕ່າງໆທີ່ກ່ຽວຂ້ອງ ໄດ້ທີ່ **www.bol.gov.la** **ກົມຄຸ້ມຄອງສະຖາບັນການເງິນ** ແລະ ສາມາດສອບຖາມຂໍ້ມູນເພີ່ມ ເຕີມ ຈາກພະແນກຄົ້ນຄວ້າສ້າງຕັ້ງ, ກົມຄຸ້ມຄອງສະຖາບັນການເງິນ ໄດ້ໃນໂມງລັດຖະການ, ໂທລະສັບ: 021 265712 ຫຼື 021 265713.

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງ ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຕ້ອງການດຳເນີນ ທຸລະກິດສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຢູ່ ສປປ ລາວ ເພື່ອຊາບ.

**ຫົວໜ້າກົມ**

ທະນາຄານ ແຫ່ງ ສປປ ລາວ
ກົມຄຸ້ມຄອງສະຖາບັນການເງິນ

ພູຂີງ ຈັນທະຈັກ